# ສູນດູແລຂັ້ນຕົ້ນແບບບູລິມະສິດ

**OFFICIAL**
**Lao | ພາສາລາວ**

- ທ່ານຕ້ອງການພົບໝໍເປັນການດ່ວນບໍ?
- ສູນດູແລຂັ້ນຕົ້ນແບບບູລິມະສິດ (PPCCs) ໃຫ້ການປິ່ນປົວຟຣີສໍາລັບທຸກຄົນທີ່ໄດ້ຮັບບາດເຈັບຫຼືເຈັບປ່ວຍຢ່າງສຸກເສີນ.
- ບັນດາທ່ານໝໍຂອງ PPCC ຈະຊ່ວຍທ່ານໃຫ້ໄດ້ຮັບການປິ່ນປົວທີ່ທ່ານຕ້ອງການ ໄດ້ໄວກວ່າພະແນກສຸກເສີນຂອງໂຮງໝໍ.
- ເຂົາເຈົ້າສາມາດປິ່ນປົວພາວະທາງສຸຂະພາບຕ່າງໆເຊັ່ນການຊຶມເຊື້ອຂັ້ນເບົາບາງ, ຜິວໄໝ້ເລັກນ້ອຍ, ອາການເຄັດ ຫຼື ສົງໄສວ່າກະດູກຫັກ.
- ຖ້າທ່ານເກີດບາດເຈັບຫຼືເຈັບປ່ວຍຢ່າງຮ້າຍແຮງ, ໃຫ້ໂທຫາເລກສູນສາມໂຕ (000).
- ຖ້າທ່ານບໍ່ຕ້ອງການການດູແລທີ່ຮີບດ່ວນ, ໃຫ້ເຮັດນັດພົບກັບທ່ານໝໍປະຈໍາຕົວຂອງທ່ານ.
- ບໍລິການ PPCC ປະກອບມີ ພະຍາດວິທະຍາ, ລັງສີວິທະຍາ ແລະ ເພສັດຊະກໍາ.
- ບໍລິການ PPCC ແມ່ນຟຣີສໍາລັບທຸກໆຄົນ, ເຖິງວ່າຈະມີບັດເມດີແຄຫຼືບໍ່ມີກໍຕາມ.
- PPCCs ແມ່ນເປີດບໍລິການຊົ່ວໂມງຍາວ, ເຈັດມື້ຕໍ່ອາທິດ.
- ທ່ານບໍ່ຈໍາເປັນຕ້ອງເຮັດນັດພົບກ່ອນ.
- ມີສູນ PPCCs ເປີດຢູ່ທົ່ວລັດ Victoria.
- ໃຫ້ເຂົ້າເບິ່ງຊ່ອງສຸຂະພາບທີ່ດີກວ່າ (Better Health Channel) ເພື່ອຫາສະຖານທີ່ແລະຂໍ້ມູນເພີ່ມເຕີມ: www.betterhealth.vic.gov.au/health/servicesandsupport/priority-primary-care-centres
- ມີນາຍພາສາໄວ້ໃຫ້ທີ່ PPCCs. ໂທຫາພະແນກບໍລິການແປເອກະສານແລະນາຍພາສາແຫ່ງຊາດ TIS ທີ່ເລກໂທ 131 450.